ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1412 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ວັນທີ 12 ກໍລະກົດ 2019

# ແຈ້ງການ

ເຖິງ: ປະຊາຊົນບັນດາເຜົ່າ ຫລື ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ

ເລື່ອງ: ການຄວັດຕາປະທັບວິສາຫະກິດແບບສະໝັກໃຈ ຫລື ແບບບໍ່ບັງຄັບ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013 ;
- ອີງຕາມ ຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ;
- ອີງຕາມ ແຈ້ງການ, ສະບັບເລກທີ 966/ຫສນຍ, ລົງວັນທີ 6 ມິຖຸນາ 2019, ເລື່ອງ: ທິດຊີ້ນຳກ່ຽວກັບການປັບປຸງຕົວຊີ້ວັດ "ການເລີ່ມຕົ້ນທຸລະກິດ" ທີ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດ ຕາມຄຳສັ່ງ 02/ນຍ, ລົງວັນທີ 1 ກຸມພາ 2018;
- ອີງຕາມ ຂໍ້ 2 ຂອງບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບການຄວັດຕາປະທັບ ແລະ ການກວດປະຫວັດນັກລົງທຶນຕ່າງປະເທດ, ຄັ້ງວັນທີ 8 ພຶດສະພາ 2019.

ເພື່ອໃຫ້ການຄວັດຕາປະທັບວິສາຫະກິດ ສອດຄ່ອງກັບມາດຕາ 21(ໃໝ່) ກົດໝາຍວ່າດ້ວຍວິສາຫະກິດ - 2013 ແລະ ຫລັກປະຕິບັດຂອງສາກົນ, ແນໃສ່ສ້າງພື້ນຖານໃຫ້ແກ່ການຂຶ້ນທະບຽນວິສາຫະກິດ Online ໃນອານາຄົດ, ສົ່ງເສີມບັນຍາກາດ "ການເລີ່ມຕົ້ນທຸລະກິດ" ໃຫ້ມີຄວາມຄ່ອງຕົວ ສະດວກ ແລະວ່ອງໄວຍິ່ງຂຶ້ນ, ຫ້ອງການ, ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງປະຊາຊົນບັນດາເຜົ່າ ຫລື ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ທີ່ຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການແລ້ວ ຈະຄວັດຕາປະທັບວິສາຫະກິດ ຫລື ບໍ່ກໍໄດ້ ຂຶ້ນກັບຄວາມຈຳເປັນ ຫລື ຄວາມຮຽກຮ້ອງຕ້ອງການຂອງວຽກງານ ທີ່ຕິດພັນກັບການເຄື່ອນໄຫວດຳເນີນທຸລະກິດ ຂອງແຕ່ລະວິສາຫະກິດ :

2. ໃນກໍລະນີ ວິສາຫະກິດ ຫາກມີຄວາມຈຳເປັນຕ້ອງມີຕາປະທັບ ເພື່ອປະສານວຽກງານທາງລັດຖະການ ກັບອົງການຈັດຕັ້ງຂອງພາກລັດ ຫລືພາກທຸລະກິດດ້ວຍກັນ ສາມາດນຳເອົາໃບທະບຽນວິສາຫະກິດ ໄປຍື່ນ

ຄວັດຕາປະທັບນຳພາກສ່ວນກ່ຽວຂ້ອງ ຂອງຂະແໜງການປ້ອງກັນຄວາມສະຫງົບຢູ່ແຕ່ລະແຂວງຕາມລະບຽບການ.

3. ພາກສ່ວນທີ່ກ່ຽວຂ້ອງ ຂອງຂະແໜງການປ້ອງກັນຄວາມສະຫງົບ ຈະອອກຕາປະທັບ ແລະອອກ ໃບອະນຸຍາດການນຳໃຊ້ຕາປະທັບ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນທີ່ວິສາຫະກິດ ໄດ້ນຳເອົາໃບ ທະບຽນວິສາຫະກິດ ໄປຍື່ນຂໍຄວັດຕາປະທັບ ຕາມທີ່ບົ່ງໄວ້ໃນມາດຕາ 21(ໃໝ່) ກົດໝາຍວ່າດ້ວຍວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.ຯລຯ

ຫົວໜ້າຫ້ອງການ

ນ.ກິ່ງສະດອນ ເພັດດາວເຮືອງ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ;
- ຫ້ອງການ, ກະຊວງປ້ອງກັນຄວາມສະຫງົບ;
- ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.